**ປະກາດສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ**

**ເລກທີ 3/2569**

**ເລື່ອງ ຮັບສະໝັກບຸກຄົນເພື່ອບັນຈຸເປັນພະນັກງານຕຳແໜ່ງເຈົ້າໜ້າທີ່ປະຈຳສູນຂໍ້ມູນເພື່ອທຸລະກິດໄທໃນລາວ**

*** * * * * * * * ***

ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ ມີຄວາມປະສົງຈະຮັບສະໝັກບຸກຄົນເພື່ອບັນຈຸເປັນພະນັກງານຕຳແໜ່ງເຈົ້າໜ້າທີ່ປະຈຳສູນຂໍ້ມູນເພື່ອທຸລະກິດໄທໃນລາວ ຈຳນວນ 1 ຕຳແໜ່ງ ໂດຍມີລາຍລະອຽດ ດັ່ງນີ້:

1. ໜ້າທີ່ຄວາມຮັບຜິດຊອບ

1.1 ຕິດຕາມ, ວິເຄາະ ແລະ ລາຍງານຂໍ້ມູນຂ່າວສານ ແລະ ນະໂຍບາຍຕ່າງໆຈາກໜ່ວຍງານທີ່ກ່ຽວຂ້ອງຂອງ ສປປ ລາວ

1.2 ສ້າງບົດລາຍງານສະຖານະການເສດຖະກິດ ແລະຂຽນບົດຄວາມທາງດ້ານເສດຖະກິດປະຈຳເດືອນ

1.3 ແປເອກະສານທີ່ກ່ຽວຂ້ອງທາງດ້ານເສດຖະກິດທັງພາສາໄທ ແລະ ພາສາລາວ

1.4 ປະສານງານເພື່ອສອບຖາມ ແລະ ຕິດຕາມປະເດັນຕ່າງໆ ລວມທັງນັດໝາຍກຳນົດການກັບໜ່ວຍງານທີ່ກ່ຽວຂ້ອງຂອງໄທ, ສປປ ລາວ ແລະອົງການສາກົນ

1.5 ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ຮັບມອບໝາຍ

2. ຄຸນສົມບັດຂອງຜູ້ສະໝັກ

2.1 ມີສັນຊາດໄທ ຫຼື ລາວ

2.2 ຈົບການສຶກສາລະດັບປະລິນຍາຕີຂຶ້ນໄປ ຫາກຈົບການສຶກສາໃນສາຂາວິຊາເສດຖະສາດ, ລັດຖະສາດ ຫຼື ນິຕິສາດຈະໄດ້ຮັບການພິຈາລະນາເປັນພິເສດ

2.3 ສາມາດອ່ານ, ຂຽນ ແລະ ສະຫຼຸບໃຈຄວາມພາສາລາວ ພາສາໄທ ແລະ ພາສາອັງກິດໄດ້ດີ

2.4 ມີຄວາມຮູ້, ຄວາມເຂົ້າໃຈພື້ນຖານດ້ານເສດຖະກິດ ໂດຍສະເພາະເສດຖະກິດໂລກ ແລະ ເສດຖະກິດ ສປປ. ລາວ

2.5 ມີອັດຖະຍາໄສດີ, ມີຄວາມສາມາດດ້ານການປະສານງານສຳລັບຕິດຕໍ່ກັບໜ່ວຍງານຕ່າງໆໄດ້

2.6 ສາມາດໃຊ້ໂປແກຣມພື້ນຖານເຊັ່ນ Microsoft Office ໄດ້ດີ ແລະ ມີທັກສະການໃຊ້ອິນເຕີເນັດໄດ້ເປັນຢ່າງດີ, ຫາກມີທັກສະໃນການໃຊ້ໂປແກຣມອື່ນ ໆ ເຊັ່ນ Canva, WordPress ຈະໄດ້ຮັບການພິຈາລະນາເປັນພິເສດ

2.7 ມີຄວາມສາມາດໃນການບໍລິຫານຈັດການເວັບໄຊແລະຈັດທຳສື່ໃນຮູບແບບຕ່າງໆ

2.8 ຫາກມີປະສົບການເຮັດວຽກ ຈະໄດ້ຮັບການພິຈາລະນາເປັນພິເສດ

2.9 ມີຄວາມຮັບຜິດຊອບສູງ ສາມາດເຮັດວຽກລ່ວງເວລາ ຫຼື ນອກສະຖານທີ່ໄດ້ຫາກຈຳເປັນ

2.10 ມີມະນຸດສຳພັນທີ່ດີ ແລະ ສາມາດເຮັດວຽກເປັນທີມໄດ້

3. ເອກະສານປະກອບການສະໝັກ
    3.1 ຮູບຖ່າຍ 2 ນິ້ວ 1 ໃບ ຖ່າຍໄວ້ບໍ່ເກີນ 6 ເດືອນ
    3.2 ສຳເນົາບັດປະຈຳໂຕ
    3.3 ສຳເນົາສຳມະໂນຄົວ
    3.4 ໃບຢັ້ງຢືນການສຶກສາ (ປະລິນຍາ/ເອກະສານຜົນການສຶກສາ)

ຜູ້ທີ່ສົນໃຈສາມາດຂໍຮັບ ແລະ ສົ່ງໃບສະໝັກໄດ້ທີ່ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ, ຖະໜົນໄກສອນພົມວິຫານ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ທຸກວັນໃນເວລາລັດຖະການ ຫຼື ອີເມວ thaibizlao@gmail.com ແລະ ສາມາດດາວໂຫຼດໃບສະໝັກຈາກ https://shorturl.asia/wAcj5 ແລະ ເຟສບຸກ Royal Thai Embassy, Vientiane ໂທ 021 – 214581 – 3 ໝົດເຂດຮັບສະໝັກວັນທີ 10 ເມສາ 2026 ໂດຍສະຖານເອກອັກຄະຣາຊະທູດຈະປະກາດລາຍຊື່ຜູ້ທີ່ໄດ້ຮັບການຄັດເລືອກ ແລະ ແຈ້ງລາຍລະອຽດເພີ່ມຕື່ມກ່ຽວກັບວັນສອບເສັງແລະສຳພາດໃຫ້ຊາບພາຍຫຼັງ

ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ
ນະຄອນຫລວງວຽງຈັນ
25 ມີນາ 2026